# ລະບຽບໃນການນຳໃຊ້ NPA Network Google Group

## I. ຂໍ້ມູນທົ່ວໄປ

### 1. NPA Networkແມ່ນຫຍັງ?

NPA Network ແມ່ນເຄືອຂ່າຍຂອງບັນດາອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກກ່ຽວກັບການພັດທະນາເພື່ອຫຼຸດຜ່ອນຄວາມທຸກຍາກ. ເປັນເຄືອຂ່າຍທີ່ບໍ່ເປັນທາງການ, ບໍ່ຫ້ວງຜົນກຳໄລ, ບໍ່ມີການເຄື່ອນໄຫວທາງດ້ານການເມືອງ ແລະ ສາດສະໜາ ຊຶ່ງໄດ້ສ້າງຕັ້ງຂຶ້ນໂດຍຄົນລາວ. ເປັນເຄືອຂ່າຍທີ່ຂັບເຄື່ອນໂດຍສະມາຊິກ ເນັ້ນເພື່ອບັນລຸເປົ້າໝາຍ ແລະ ຈຸດປະສົງຂອງຕົນເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ. ລາວ.

### 2. NPA Network Google Group ແມ່ນຫຍັງ?

NPA Network Google Group ແມ່ນເວທີສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານຂອງ NPA Network ກ່ຽວກັບວຽກງານການພັດທະນາ ແລະ ວຽກງານທາງສັງຄົມຂອງບັນດາສະມາຊິກຈາກອົງການຈັດຕັ້ງທາງສັງຄົມຕ່າງໆທີ່ສົນໃຈ.

### 3. ຈຸດປະສົງຂອງການນຳໃຊ້ NPA Network Google Group?

ເພື່ອສ້າງໂອກາດ ແລະ ອຳນວຍຄວາມສະດວກໃຫ້ແກ່ບັນດາສະມາຊິກຈາກອົງການຈັດຕັ້ງທາງສັງຄົມລາວໃນການປະສານງານ, ແລກປ່ຽນຂໍ້ມູນຂ່າວສານແລະ ປະສົບການເຊິ່ງກັນແລະກັນ ເພື່ອຜູກແໜ້ນຄວາມສາມັກຄີ ແລະ ຄວາມຮັກແພງ.

### 4. ເຫດຜົນໃນການນຳໃຊ້ NPA Network Google Group?

ກ່ອນການນຳໃຊ້ NPA Network Google Group ແຕ່ປີ 2009 - ປີ 2011ພວກເຮົາໄດ້ນ□າໃຊ້ເວທີ Lao NPA Forum ເພື່ອສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານນຳກັນ, ແຕ່ຍ້ອນວ່າໃນກຸ່ມນີ້ມີສະມາຊິກຢ່າງຫຼວງຫຼາຍ (ເກືອບ 200 ຄົນ) ທັງຈາກອົງການຈັດຕັ້ງທາງສັງຄົມ, ພາກລັດ, ອົງການຈັດຕັ້ງສາກົນຕ່າງໆທັງຢູ່ພາຍໃນ ແລະ ຕ່າງປະເທດ. ສະນັ້ນເວລາພວກເຮົາສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານຕ່າງໆເປັນພາສາລາວ, ບາງຄັ້ງກໍ່ໄດ້ຖົກຖຽງກັນເປັນພາສາລາວ ຊຶ່ງເຮັດໃຫ້ເຂົາເຈົ້າບໍ່ເຂົ້າໃຈ ແລະ ລຳຄານ ໂດຍສະເພາະສະມາຊິກຜູ້ທີ່ມາຈາກພາກລັດກໍ່ຮູ້ເຫັນເລື່ອງຕ່າງໆທີ່ພວກເຮົາຖົກຖຽງກັນນັ້ນ. ສະນັ້ນເພື່ອຄວາມສະດວກ ແລະ ຫຼີກລ້ຽງບັນຫາດັ່ງກ່າວພວກເຮົາຈິ່ງໄດ້ສ້າງ ແລະ ນຳໃຊ້ເວທີ NPA Network Google Group ນີ້ເພື່ອສົນທະນາ ແລະ ແລກປ່ຽນເປັນຫຼັກ.

### 5. ວິທີການ ແລະ ປະເພດຂໍ້ມູນຂ່າວສານ

ເຮືອນຮຽນຮູ້ເພື່ອການພັດທະນາ (ຮຮຮ)/NPA Network ໄດ້ສ້າງເວທີແລກປ່ຽນນີ້ແບບບໍ່ເປັນທາງການເພື່ອສະໜອງບັນຊີລາຍຊື່ບັນດາສະມາຊິກທີ່ສົນໃຈໃຫ້ກັບກຸ່ມ ແລະ ປະຕິບັດການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານຕ່າງໆໃຫ້ກັບ

ສະມາຊິກໂດຍບໍ່ໄດ້ຄິດຄ່າບໍລິການເຊັ່ນ: ຂໍ້ມູນກ່ຽວກັບກິດຈະກໍາ, ແຫຼ່ງທຶນ, ການສຶກສາ,ໂຄສະນາ, ການຝຶກອົບຮົມ ແລະ ສໍາມະນາຕ່າງໆ.

ນອກຈາກນີ້ພວກເຮົາຍັງໄດ້ສົ່ງຂ່າວສານອື່ນໆທີ່ເປັນປະໂຫຍດຈາກບັນດາແຫຼ່ງຂ່າວອື່ນໆໃຫ້ກັບສະມາຊິກ, ມີເວັບໄຊສ໌ ແລະ ຫ້ອງສະໝຸດຂອງຣຣຣ ເພື່ອບໍລິການຂໍ້ມູນຕື່ມອີກ. ໃນເວັບໄຊສ໌ຂອງຣຣຣ ແມ່ນມີ web links ເພື່ອເຂົ້າສູ່ແຫຼ່ງຂໍ້ມູນຂ່າວສານ ແລະ ເອກະສານຕ່າງໆທີ່ເປັນປະໂຫຍດ ເຊັ່ນ: LaoFAB, Laolink, Lao44, NGO Network, UNDP Laos, EU Laos, MoHA...

## 6. ຜູ້ຮັບຜິດຊອບເວທີນີ້

ຜູ້ຮັບຜິດຊອບແມ່ນເຮືອນຮຽນຮູ້ເພື່ອການພັດທະນາ, ສ່ວນຫຼາຍແມ່ນ ນາງ ວິເສດສິນ ຫ່ວງວິໄລ ຜູ້ຊ່ວຍຣຣຣ ຈະເປັນຜູ້ຮັບຜິດຊອບຫຼັກສົ່ງຂໍ້ມູນຂ່າວສານຕ່າງໆອອກໃຫ້ກຸ່ມ ພ້ອມທັງເປັນຜູ້ເພີ່ມລາຍຊື່ຜູ້ທີ່ສົນໃຈເຂົ້າ ຫຼື ເອົາອອກ. ຖ້າທ່ານໃດມີຄໍາຖາມ ຫຼື ຢາກເຂົ້າອອກຈາກກຸ່ມ ກລນ ຕິດຕໍ່ຜູ້ກ່ຽວໂດຍກົງ (ອີເມວ: assistant@lao-npa-network.org,ໂທ: 021 265531)

ຣຣຣ ຂໍຮຽກຮ້ອງ ແລະ ຢາກໃຫ້ສະມາຊິກທຸກຄົນຮັບຜິດຊອບເປັນເຈົ້າການນໍາກັນ ແລະ ປະຕິບັດການສົນທະນາແລກປ່ຽນຂໍ້ມູນຕ່າງໆນໍາກັນຢ່າງສະໝໍ່າສະເໝີ **<u>ແຕ່ບໍ່ແມ່ນລໍຖ້າຮັບຂໍ້ມູນຈາກຣຣຣ ແຕ່ຝ່າຍດຽວ</u>**

# II. ລະບຽບການນໍາໃຊ້ ແລະ ສົນທະນາໃນເວທີນີ້

## 1. ສະມາຊິກກຸ່ມ

ເວທີນີ້ແມ່ນເວທີແບບບໍ່ເປັນທາງການ, ສະນັ້ນຜູ້ທີ່ເປັນສະມາຊິກທີ່ແລກປ່ຽນຂໍ້ມູນຂ່າວສານຕ່າງໆກໍ່ແມ່ນພະນັກງານ ແລະ ນິຕິບຸກຄົນທົ່ວໄປຈາກບັນດາອົງການຈັດຕັ້ງທາງສັງຄົມລາວ **<u>ແຕ່ບໍ່ແມ່ນໃນນາມອົງການທີ່ສັງກັດຢູ່</u>** ຍົກເວັ້ນແຕ່ ບັນດາຜູ້ຕິດຕໍ່ ຫຼື ຜູ້ປະສານງານທີ່ໄດ້ຮັບການແຕ່ງຕັ້ງໂດຍຫົວໜ້າຂອງສະມາຊິກສະມາຄົມຣຣຣ.

## 2. ພາສາທີ່ໃຊ້ໃນການສົນທະນາ

ແນະນໍາໃຫ້ໃຊ້ພາສາລາວເປັນຫຼັກ ເພື່ອໃຫ້ເຂົ້າໃຈຈະແຈ້ງຕາມຫົວຂໍ້ຕ່າງໆທີ່ສົນໃຈ, ສ່ວນພາສາອັງກິດແມ່ນໃຫ້ໃຊ້ບາງຄັ້ງຄາວຊຶ່ງຂຶ້ນກັບຫົວຂໍ້ ຫຼື ຂ່າວສານແລະ ເອກະສານຕ່າງໆທີ່ມີຢູ່ນັ້ນ.

## 3. ເນື້ອໃນ ແລະ ຫົວຂໍ້ຕ່າງໆທີ່ແລກປ່ຽນ ແລະ ສົນທະນາ

ຫົວຂໍ້ຕ່າງໆທີ່ແລກປ່ຽນ ແລະ ສົນທະນາຕ້ອງກ່ຽວພັນກັບວຽກງານຂອງພັດທະນາບັນດາອົງການຈັດຕັ້ງທາງສັງຄົມ, ຂໍ້ມູນກ່ຽວກັບກິດຈະກໍາ, ແຫຼ່ງທຶນ, ການສຶກສາ, ການໂຄສະນາ, ການຝຶກອົບຮົມ ແລະ ຫົວຂໍ້ຕ່າງໆທີ່ມີເນື້ອໃນສະໜັບສະໜູນນະໂຍບາຍຂອງພັກລັດໃນການພັດທະນາເສດຖະກິດ-ສັງຄົມ **<u>ແຕ່ບໍ່ແມ່ນຫົວຂໍ້ທີ່ກ່ຽວຂ້ອງກັບການເມືອງ ຫຼື ຂັດຕໍ່ນະໂຍບາຍດັ່ງກ່າວ.</u>**

ໃນກໍລະນີເນື້ອໃນ ແລະ ຫົວຂໍ້ຕ່າງໆບໍ່ເໝາະສົມ ຫຼື ບໍ່ເປັນປະໂຫຍດ ພວກເຮົາຈະແຈ້ງເຕືອນຜູ້ທີ່ສົ່ງມານັ້ນ ແລະ ຖ້າມີບັນຫາແມ່ນຜູ້ກ່ຽວຕ້ອງຮັບຜິດຊອບເອົາເອງ **<u>ແຕ່ບໍ່ແມ່ນອົງການຂອງຜູ້ກ່ຽວ ຫຼື ຫ້ອງການຣຣຣ ຫຼື NPA Network</u>**

## 4. ວິທີການສົ່ງຂໍ້ມູນໃຫ້ກຸ່ມ (ສົ່ງອີເມວ)

ເພື່ອເຮັດໃຫ້ການສົ່ງຂໍ້ມູນຂ່າວສານຕ່າງໆຖືກຕ້ອງຕາມຄວາມຕ້ອງການກັບຄູ່ສົນທະນາ ທ່ານຄວນພິຈາລະນາດັ່ງນີ້:

4.1 ໃນກໍລະນີທີ່ທ່ານຕ້ອງການຢາກສົນທະນາເປັນການສ່ວນຕົວກັບຜູ້ທີ່ສົ່ງມາ ແມ່ນໃຫ້ທ່ານກົດປຸ່ມ Reply, ແຕ່ກໍລະນີທີ່ທ່ານຢາກສົນທະນາກັບໝົດທຸກຄົນໃນກຸ່ມແມ່ນໃຫ້ກົດປຸ່ມ Reply to all.

4.2 ກໍລະນີທີ່ທ່ານຢາກຕອບ ຫຼື ສົນທະນາເປັນການສ່ວນຕົວກັບຜູ້ທີ່ສົ່ງມາ ແລະ ຫຼື ກັບຜູ້ໃດຜູ້ໜຶ່ງອີກໃນກຸ່ມໃຫ້ທ່ານກົດປຸ່ມForward ແລ້ວຂຽນອີເມວຂອງຜູ້ທີ່ສົ່ງມາ ແລະ ຫຼື ຜູ້ນັ້ນລົງໄປແລ້ວສົ່ງ.

4.3 ຖ້າທ່ານມີບັນຫາກັບ ອີເມວ ທີ່ທ່ານສົ່ງໄປນັ້ນຕີກັບຄືນມາຫາທ່ານ ນັ້ນອາດເປັນເພາະອີເມວທີ່ທ່ານສົ່ງໄປຫານັ້ນຜິດ ຫຼືທ່ານບໍ່ແມ່ນສະມາຊິກ ຫຼື ທ່ານໃຊ້ອີເມວອື່ນຂອງທ່ານເພື່ອສົ່ງຂໍ້ມູນດັ່ງກ່າວ. ກລນ ຕິດຕໍ່ ນາງ ວິເສດສິນ ຫ່ວງວິໄລ ເພື່ອຊ່ວຍ ຫຼື ເພີ່ມອີເມວນັ້ນເຂົ້າອີກຕາມແຕ່ກໍລະນີ.

4.4 ໃຫ້ຫຼີກລ້ຽງສົ່ງຂໍ້ມູນທີ່ມີເອກະສານຕິດຄັດທີ່ມີຂະໜາດໃຫຍ່ເກີນໄປ (4-10mb ຂຶ້ນໄປ)ໃຫ້ກຸ່ມເພາະມັນຈະເຮັດໃຫ້ສະມາຊິກດາວໂຫຼດດົນ ອັນເຮັດໃຫ້ຜູ້ອື່ນໃນຫ້ອງການເຂົ້າອິນເຕີເນັດໄດ້ຍາກ ແລະ ລໍາຄານ, ຖ້າຈໍາເປັນທ່ານຄວນຫຍໍ້ມັນກ່ອນຈຶ່ງສົ່ງ ຫຼື ສ້າງ Link ຫຼື Upload ເອກະສານດັ່ງກ່າວລົງທາງເວັບໄຊສ໌ຂອງຮຮຮ ແລ້ວແຈ້ງໃຫ້ສະມາຊິກ.

## 5. ມາລະຍາດ ໃນການແລກປ່ຽນ ແລະ ສົນທະນາ

**5.1** ເວທີນີ້ເປັນເວທີຮໍ່າຮຽນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ. ເພື່ອຜູກແໜ້ນຄວາມສາມັກຄີ ແລະ ຄວາມຮັກແພງ, ການສົນທະນາຄວນໃຊ້ພາສາ ແລະ ຄໍາເວົ້າທີ່ມີລັກສະນະສ້າງສັນຕາມຮີດຄອງປະເພນີອັນດີງາມຂອງລາວເຮົາ, ຫຼີກລ້ຽງການມີອັກຄະຕິ, ການຖົກຖຽງ ແລະ ບໍ່ເຄົາລົບຕໍ່ຄູ່ສົນທະນາ ຜູ້ທີ່ມີຄວາມຄິດເຫັນແຕກຕ່າງກັບຕົນເອງ.

**5.2** ຖ້າກໍລະນີທ່ານຢາກແນະນໍາບົດຮຽນ, ຕໍານິສົ່ງຂ່າວ ຫຼື ຍ້ອງຍໍຄວນໃຊ້ວິຈາລະຍານໃນການປະຕິບັດ ຫຼື ທ່ານອາດເລືອກວິທີການສົ່ງຂ່າວແບບຂ້າງເທິງ Reply ຫຼື Reply to all ຊຶ່ງຂຶ້ນກັບແຕ່ກໍລະນີເຫັນວ່າເໝາະສົມ

**5.3** ຄວນຕອບ ຫຼື ສົນທະນາໃຫ້ຖືກກັບຫົວຂໍ້ ແລະ ປະເດັນກັບຜູ້ທີ່ສົ່ງມານັ້ນ, ຖ້າທ່ານຢາກສົນທະນາຫົວຂໍ້ອື່ນທີ່ບໍ່ກ່ຽວຂ້ອງກັບຫົວຂໍ້ທີ່ສົ່ງມານັ້ນ ແມ່ນທ່ານຄວນສ້າງອີເມວໃໝ່ ແລະໃສ່ຫົວຂໍ້ໃໝ່ເພື່ອບໍ່ໃຫ້ຜູ້ອື່ນໆໃນກຸ່ມສັບສົນ ແລະ ຈົ່ມວ່າ-ຕອບບໍ່ເຂົ້າເລື່ອງ ແລະ ກົງປະເດັນ.

ຕາງໜ້າການຈັດຕັ້ງຮຮຮ